ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4701/ກປ

ນະຄອນຫຼວງວຽງຈັນ, ວັນທີ 17 NOV 2023

# ແຈ້ງການແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດຄຳແນະນຳ ວ່າດ້ວຍການປັບປຸງກົງຈັກ ຄຸ້ມຄອງປ່າສະຫງວນ ສະບັບເລກທີ 1178/ກປ, ລົງວັນທີ 01 ເມສາ 2022

ເຖິງ: - ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ;
- ບັນດາກອງຄຸ້ມຄອງປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້;
- ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຄຳແນະນຳ ວ່າດ້ວຍການປັບປຸງກົງຈັກ ຄຸ້ມຄອງປ່າສະຫງວນ ສະບັບເລກທີ 1178/ກປ, ລົງວັນທີ 01 ເມສາ 2022;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 4981/ກປມ, ລົງວັນທີ 11 ຕຸລາ 2023;
- ອີງຕາມ ໜັງສືສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 2429/ກຈພ, ລົງວັນທີ 08 ພະຈິກ 2023.

ເພື່ອເປັນບ່ອນອີງໃຫ້ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ, ບັນດາກອງຄຸ້ມຄອງປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ/ນະຄອນ ໃນຂອບເຂດທົ່ວປະເທດ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ຄຳແນະນຳ ວ່າດ້ວຍການປັບປຸງກົງຈັກ ຄຸ້ມຄອງປ່າສະຫງວນ ສະບັບເລກທີ 1178/ກປ, ລົງວັນທີ 01 ເມສາ 2022 ເພື່ອໃຫ້ສອດຄ່ອງກັບຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສະບັບເລກທີ 1591/ກປ, ລົງວັນທີ 27 ທັນວາ 2021 ແລະ ເພື່ອເຮັດໃຫ້ການຄຸ້ມຄອງກົງຈັກການຈັດຕັ້ງ, ການຄຸ້ມຄອງພັກ, ພະນັກງານ-ລັດຖະກອນ ທີ່ສັງກັດຢູ່ບັນດາກອງຄຸ້ມຄອງ ປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດທີ່ກວມຫຼາຍແຂວງ ແລະ ປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດ ທີ່ຂຶ້ນທະບຽນເປັນອຸທິຍານມໍລະດົກທາງທຳມະຊາດ ຂອງພາກພື້ນ ແລະ ສາກົນ ມີຄວາມຄ່ອງຕົວ, ຖືກຕ້ອງ, ມີປະສິດທິພາບ ແລະ ປະສິດທິຜົນສູງ, ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງແຈ້ງມາຍັງແຕ່ລະພາກສ່ວນ ດັ່ງນີ້:

1. ກົງຈັກການຈັດຕັ້ງ ຂອງບັນດາກອງຄຸ້ມຄອງ ປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດທີ່ກວມຫຼາຍແຂວງ ແລະ ປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດ ທີ່ຂຶ້ນທະບຽນເປັນອຸທິຍານມໍລະດົກທາງທຳມະຊາດ ຂອງພາກພື້ນ ແລະ ສາກົນ ແມ່ນຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ໂດຍແມ່ນກົມປ່າໄມ້ ເປັນເສນາທິການ ແລະ ເປັນຜູ້ຊີ້ນຳໂດຍກົງທາງດ້ານວິຊາການ ຊຶ່ງຫົວໜ້າກອງ ມີຕຳແໜ່ງບໍລິຫານ ປະເພດ 4; ບັນດາກອງດັ່ງກ່າວ ມີຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວເປັນອັນສະເພາະ, ມີການກຳນົດຕຳແໜ່ງງານຕາມການ

ສະເໜີ ຂອງບັນດາກອງ ໂດຍຜ່ານກົມປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມລະບຽບການທີ່ກໍານົດໄວ້. ຫົວໜ້າ, ຮອງຫົວໜ້າ ກອງ; ຫົວໜ້າ, ຮອງຫົວໜ້າ ໜ່ວຍງານ ຕ້ອງແມ່ນພະນັກງານ-ລັດຖະກອນ ຜູ້ທີ່ມີຄວາມຮູ້, ຄວາມສາມາດ ຕາມມາດຕະຖານຂອງຕໍາແໜ່ງງານທີ່ກໍານົດໄວ້ ເພື່ອຮັບປະກັນການນໍາພາ-ຊີ້ນໍາວຽກງານ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກໍານົດໄວ້. ສໍາລັບກອງຄຸ້ມຄອງປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດ ທີ່ບໍ່ກວມເອົາຫຼາຍແຂວງ ແລະ ບໍ່ນອນໃນບັນຊີເປັນມໍລະດົກພາກພື້ນ ແລະ ມໍລະດົກໂລກ ດ້ານກົງຈັກການຈັດຕັ້ງ ແມ່ນຂຶ້ນກັບພະແນກກະສິກໍາ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ ຊຶ່ງຫົວໜ້າກອງ ມີຕໍາແໜ່ງບໍລິຫານ ປະເພດ 5;

2. ຫົວໜ້າ, ຮອງຫົວໜ້າ ກອງ; ຫົວໜ້າ, ຮອງຫົວໜ້າ ໜ່ວຍງານ ແລະ ວິຊາການ ແມ່ນລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ແຕ່ງຕັ້ງສັບຊ້ອນ ບົນພື້ນຖານການນໍາສະເໜີ ຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ/ນະຄອນຫຼວງວຽງຈັນ ໂດຍຜ່ານກົມປ່າໄມ້. ພະນັກງານ-ລັດຖະກອນ ທີ່ລົງປະຈໍາຢູ່ບັນດາກອງດັ່ງກ່າວຕ້ອງເອົາໃຈໃສ່ຍົກສູງຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ຕາມການກໍານົດຕໍາແໜ່ງງານ, ຖືເອົາຜົນສໍາເລັດ ຂອງການປະຕິບັດໜ້າທີ່ຢູ່ກອງ ເປັນໄມ້ຫຼາວັດແທກ, ເປັນພື້ນຖານໃຫ້ແກ່ການເລືອກເຟັ້ນເປັນເປົ້າໝາຍຂະຫຍາຍເຂົ້າພັກ, ບໍາລຸງກໍ່ສ້າງເປັນມາດຖານເງື່ອນໄຂໜຶ່ງ ເຂົ້າໃນແຜນກໍານົດພະນັກງານນໍາພາ-ຄຸ້ມຄອງ;

3. ການນໍາພາ-ຊີ້ນໍາ ວຽກພັກ ຂອງບັນດາກອງຄຸ້ມຄອງ ປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດທີ່ກວມຫຼາຍແຂວງ ແລະ ປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດ ທີ່ຂຶ້ນທະບຽນເປັນອຸທິຍານມໍລະດົກທາງທໍາມະຊາດຂອງພາກພື້ນ ແລະ ສາກົນ ສະເໜີໃຫ້ສ້າງຕັ້ງເປັນໜ່ວຍພັກໜຶ່ງ ຖ້າຫາກຫ້ອງການຂອງກອງ ມີທີ່ຕັ້ງຢູ່ໃນເທດສະບານແຂວງ ແມ່ນໃຫ້ຂຶ້ນກັບ ຄະນະພັກຮາກຖານພະແນກກະສິກໍາ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ, ກໍລະນີຫ້ອງການຂອງກອງ ມີທີ່ຕັ້ງຢູ່ນອກເທດສະບານແຂວງ ສະເໜີໃຫ້ຂຶ້ນກັບ ອົງຄະນະພັກເມືອງ/ນະຄອນ ບ່ອນຫ້ອງການຂອງກອງຕັ້ງຢູ່ ຕາມຄວາມເໝາະສົມ ເພື່ອສະດວກໃນການເຄື່ອນໄຫວຮ່ວມຊີວິດການເມືອງ. ໃນກໍລະນີກອງດັ່ງກ່າວ ຫາກບໍ່ທັນມີສະມາຊິກພັກສົມບູນ ຮອດ 3 ສະຫາຍ ກໍໃຫ້ສະເໜີສັບຊ້ອນບັນດາສະຫາຍດັ່ງກ່າວ ເຂົ້າຮ່ວມດໍາເນີນຊີວິດພັກກັບໜ່ວຍພັກໃດໜຶ່ງ ທີ່ຂຶ້ນກັບ ຄະນະພັກຮາກຖານພະແນກກະສິກໍາ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ ຫຼື ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ/ນະຄອນບ່ອນທີ່ຫ້ອງການຂອງກອງຕັ້ງຢູ່, ຖ້າມີຈໍານວນສະມາຊິກພັກເພີ່ມຂຶ້ນ ສອດຄ່ອງກັບລະບຽບການທີ່ກໍານົດໄວ້ຈຶ່ງສະເໜີຂໍແຍກອອກເປັນໜ່ວຍພັກໜຶ່ງ ທີ່ຂຶ້ນກັບ ຄະນະພັກຮາກຖານພະແນກກະສິກໍາ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ ຫຼື ອົງຄະນະພັກເມືອງ/ນະຄອນ ຕາມຄວາມເໝາະສົມ; ສໍາລັບ 03 ອົງການຈັດຕັ້ງມະຫາຊົນ ສະເໜີໃຫ້ສ້າງຕັ້ງເປັນໜ່ວຍຮາກຖານ ຕາມເງື່ອນໄຂຕົວຈິງ;

4. ການປະຕິບັດ ຮັບ-ເບີກຈ່າຍ ເງິນເດືອນ, ເງິນອຸດໜູນ, ນະໂຍບາຍອຸດໜູນຕ່າງໆ ຂອງພະນັກງານ-ລັດຖະກອນ ແມ່ນໃຫ້ຮັບ ແລະ ຈັດຕັ້ງປະຕິບັດ ຢູ່ບ່ອນສັງກັດເດີມ ຕາມປົກກະຕິ; ສໍາລັບການບໍາລຸງ, ຝຶກອົບຮົມໄລຍະສັ້ນ ຂອງພະນັກງານ-ລັດຖະກອນ ແມ່ນໃຫ້ນໍາສະເໜີ ກົມປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້ ໂດຍຜ່ານບ່ອນສັງກັດເດີມ;

5. ການປະເມີນຜົນງານການປະຕິບັດວຽກງານ ແລະ ການຍ້ອງຍໍຜົນງານ ຂອງພະນັກງານ-ລັດຖະກອນ ໃຫ້ປະຕິບັດຢູ່ບ່ອນສັງກັດເດີມ ບົນພື້ນຖານການຢັ້ງຢືນຂອງກອງທີ່ກ່ຽວຂ້ອງ. ບ່ອນສັງກັດເດີມ ມີໜ້າທີ່ໃນການຊຸກຍູ້, ຕິດຕາມ ການປະຕິບັດໜ້າທີ່ວຽກງານ ຂອງພະນັກງານ-ລັດຖະກອນ ທີ່ຖືກແຕ່ງຕັ້ງສັບຊ້ອນໄປປະຈໍາການຢູ່ກອງ ແລະ ພະນັກງານ-ລັດຖະກອນ ດັ່ງກ່າວ ກໍມີພັນທະໜ້າທີ່ໃນການລາຍງານການປະຕິບັດວຽກງານຂອງຕົນ ໃຫ້ບ່ອນສັງກັດເດີມ ຮັບຊາບ ຢ່າງເປັນປົກກະຕິ;

6. ໃຫ້ ກົມປ່າໄມ້, ກົມຈັດຕັ້ງ ແລະ ພະນັກງານ ແລະ ພາກສ່ວນທີ່ກ່ຽວຂ້ອງ ປະສານສົມທົບໃນການຊຸກຍູ້, ຕິດຕາມ ການປັບປຸງກົງຈັກການຈັດຕັ້ງ ຂອງກອງຄຸ້ມຄອງປ່າສະຫງວນ, ກອງຄຸ້ມຄອງປ່າສະຫງວນແຫ່ງຊາດ, ອຸທິຍານແຫ່ງຊາດ ໃຫ້ສໍາເລັດໂດຍໄວ;

7. ການຈັດຕັ້ງປະຕິບັດຕົວຈິງ ຫາກພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານກະຊວງກະສິກຳ ແລະ ປ່າໄມ້, ອົງການປົກຄອງແຂວງ/ນະຄອນຫຼວງວຽງຈັນ ແລະ ອົງການປົກຄອງເມືອງ/ນະຄອນ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອມີທິດຊີ້ນຳ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ

ບ່ອນນຳສົ່ງ

| | |
|---|---|
| 1. ທ່ານ ລັດຖະມົນຕີ, ຮອງລັດຖະມົນຕີ | 01 ສະບັບ; |
| 2. ຫ້ອງການ | 01 ສະບັບ; |
| 3. ກົມຈັດຕັ້ງ ແລະ ພະນັກງານ | 01 ສະບັບ; |
| 4. ກົມປ່າໄມ້ | 02 ສະບັບ; |
| 5. ບັນດາພະແນກ ກປ ແຂວງ/ນະຄອນຫຼວງວຽງຈັນ | 01 ສະບັບ; |
| 6. ບັນດາກອງຄຸ້ມຄອງປ່າສະຫງວນ, ອຸທິຍານ ແຫ່ງຊາດ | 01 ສະບັບ; |
| 7. ເກັບຮັກສາໄວ້ | 02 ສະບັບ. |